# ບົດທີ 6

# ພະບັນຍັດຂໍ້ໃຫຍ່




*ພວກຟາລີຊາຍແລະປະໂລຫິດ ໂຕ້ຖຽງກັບພະອົງໃນພະວິຫານໝົດມື້ວັນອັງຄານ. ມີຄົນໜຶ່ງຖາມພະອົງວ່າ "ໃນພະບັນຍັດຂໍ້ໃດເປັນຂໍ້ໃຫຍ່" ໃນບົດຮຽນນີ້ເຮົາຈະ ສຶກສາເລື່ອງຄຳຕອບຂອງພະອົງ ວ່າຈະສອນເຮົາຢ່າງໃດກ່ຽວກັບຄວາມສຳພັນ ລະຫວ່າງເຮົາກັບພະເຈົ້າ.*

**1** ໃນບົດຮຽນນີ້ເຮົາຈະສຶກສາເລື່ອງພະບັນຍັດຂໍ້ໃຫຍ່. ໃຫ້ອ່ານ ມທ 22:34-40 ກ່ອນ.

ກ. ເຫດການນີ້ເກີດຂຶ້ນໃນວັນໃດ? ____________________

ຂ. ຢູ່ບ່ອນໃດ? ____________________

ຄ. ແມ່ນໃຜຖາມພະເຢຊູໃນຂໍ້ 36? ____________________

ງ. ຄົນນັ້ນຂຶ້ນກັບພວກໃດ? ____________________

ຈ. ເພິ່ນຖາມຫຍັງ? ____________________

ສ. ພະເຢຊູຍົກພະບັນຍັດຈັກປະການໃນເວລາຕອບ? ____________________

**2** ມາລະໂກບັນທຶກເລື່ອງດຽວນີ້ໃນບົດ 12 ຂໍ້ 28:34

ກ. ໃນຂໍ້ 28 ຜູ້ທີ່ຖາມພະເຢຊູມີຕຳແໜ່ງໃດ? ____________________

ຂ. ພວກນັກທຳນັ້ນຢູ່ໃກ້ສິດກັບພວກໃດ? ____________________

ຄ. ພວກນັກທຳເຫັນພ້ອມກັບຄຳຖາມຂອງພະອົງບໍ່? ____________________

ງ. ສຸດທ້າຍພະອົງຕອບເຂົາຢ່າງໃດ? ____________________

**3** ພະອົງເຫັນວ່ານັກທຳນັ້ນຕອບຢ່າງຖືກຕ້ອງວ່າພະບັນຍັດຂໍ້ໃຫຍ່ນັ້ນສຳຄັນທີ່ສຸດ.

ກ. ໃນ ມັດທາຍ 22:37 ພະບັນຍັດຂໍ້ໃຫຍ່ຄືຫຍັງ? ____________________

ຂ. ຂໍ້ນັ້ນຫາໄດ້ໃນພະທຳໃດບົດແລະຂໍ້ໃດໃນພະຄຳພີເດີມ? ____________________

ຄ. ພະບັນຍັດຂໍ້ທີສອງຄືຫຍັງ? ________________________________________

ງ. ຫາໄດ້ໃນພະທຳໃດບົດແລະຂໍ້ໃດໃນພະຄຳພີເດີມ? _________ (ສະບັບ 1979 ບໍ່ມີເທື່ອ)

**4** ພະເຍຊູຕອບເຂົາດ້ວຍຍົກສອງຂໍ້ຈາກພະຄຳພີເດີມມາ. ທັງສອງຂໍ້ນັ້ນກ່າວເລື່ອງຫຍັງ? ___

**5** ທັງຂໍ້ໃຫຍ່ແລະຂໍ້ທີສອງບອກວ່າເຮົາຈົ່ງມີຄວາມຮັກ

ກ. ຈົ່ງຮັກພະເຈົ້າເປັນຂໍ້ໃຫຍ່ຫຼືຂໍ້ທີສອງ? ______________________________

ຂ. ຈົ່ງຮັກເພື່ອນບ້ານເປັນຂໍ້ໃດ? ____________________________________

**6** ພະບັນຍັດຂໍ້ໃຫຍ່ຄືຈົ່ງຮັກພະເຈົ້າຫຼືຮັກເພື່ອນບ້ານ? __________________________

## ພະບັນຍັດຂໍ້ໃຫຍ່

**7** ກ. ໃນມາລະໂກ 12:30 ເຮົາຈົ່ງຮັກໃຜ? ______________________________

ຂ. ຈົ່ງຮັກດ້ວຍສຸດ _______ ສຸດ _______ ສຸດ __________ ແລະດ້ວຍສຸດ _______ . (ຕື່ມ)

**8** ມະນຸດເຮົາມີຢູ່ຫຼາຍສ່ວນ ຄຳສັ່ງນັ້ນທີ່ເຮົາຈະຮັກພະເຈົ້າດ້ວຍທຸກສ່ວນຂອງເຮົາ. ຄວນທີ່ຈະຮັກພະເຈົ້າເຖິງ ຂະໜາດໃດ? (ເລືອກ)

ກ. ______ ແລ້ວແຕ່ມີເວລາ ຂ. ______ ໜ້ອຍກວ່າທີ່ຈະຮັກເພື່ອນບ້ານ

ຄ. ______ ໜ້ອຍກວ່າທີ່ຈະຮັກຕົນເອງ ງ. ______ ຢ່າງບໍ່ຈຳກັດ

**9** ໃນ ມາລະໂກ 12:30 ເຮົາຈົ່ງຮັກພະເຈົ້າດ້ວຍ 4 ສ່ວນໃດ?

______________________________ ______________________________

______________________________ ______________________________

*ໃນພາສາລາວ ຄຳວ່າ "ຈິດ" ແລະ "ໃຈ" ລວມເປັນຄຳຄູ່ກັນ ແມ່ນດ້ວຍຈິດໃຈທີ່ເຮົາຮູ້ສຶກມີຄວາມສຸກຫຼືຄວາມທຸກ. ຖ້າເຮົາມັກສິ່ງໜຶ່ງສິ່ງໃດແມ່ນແຕ່ເຮົາມັກດ້ວຍຈິດໃຈອາລົມຂຶ້ນຢູ່ກັບຈິດໃຈ.*

*ຄວາມເຂົ້າໃຈ ຫຼືຮຽນຮູ້ ແລະຄວາມສະຫຼາດຂຶ້ນຢູ່ກັບຄວາມຄິດ.*

*ການກະທຳຫຼືກິດຈະການຂຶ້ນຢູ່ກັບກຳລັງເຮົາ.*

**10** ໃຫ້ທ່ານເອົາຄວາມຈາກຂ້າງຊ້າຍມາຈັບຄູ່ກັບຄຳອະທິບາຍຂ້າງຂວາ

| | | |
|---|---|---|
| ຈິດໃຈ | __________ | ກ. ເຂົ້າໃຈຮຽນຮູ້, ຄວາມສະຫຼາດ |
| ຄວາມຄິດ | __________ | ຂ. ການກະທຳ, ກິດຈະການ, ແຮງ |
| ກຳລັງ | __________ | ຄ. ຄວາມຮູ້ສຶກທຸກສຸກ, ອາລົມ, ມັກ |

**11** ກ. ສິ່ງທີ່ເຮົາເຮັດຂຶ້ນຢູ່ກັບສ່ວນໃດ? ____________________________________

ຂ. ທີ່ເຮົາສຳນຶກຂຶ້ນຢູ່ກັບຫຍັງ? ________________________________________

ຄ. ການຮູ້ຈັກຢູ່ກັບຝ່າຍໃດ? ______________________________

**12** ໃນເລື່ອງພະບັນຍັດທີ່ບັນທຶກໄວ້ໃນມາລະໂກບົດແລະຂໍ້ໃດ? ______________

*ມະນຸດທີ່ມີຊີວິດປະກອບດ້ວຍ 3 ສ່ວນກໍວ່າໄດ້ຄື: ຈິດໃຈ ຄວາມຄິດ ແລະກໍາລັງ. ຄືຄືນທີ່ມີຊີວິດປະກອບ ດ້ວຍ 3 ສ່ວນດັ່ງທີ່ສະແດງໄວ້ໃນຮູບເຊືອກນີ້:*

**13** ກ. ຄວາມສຸກ, ຄວາມທຸກ, ອາລົມຂຶ້ນຢູ່ກັບສ່ວນໃດ? ____________________




ຂ. ຄວາມສະຫຼາດ, ເຂົ້າໃຈ, ແລະຮຽນຮູ້ເດ? ______________________

ຄ. ການກະທໍາ, ແຮງ, ກິດຈະການ? ____________________________

**14** ຄືນທີ່ມີຊີວິດຢູ່ປະກອບດ້ວຍຈັກສ່ວນ? ____________________________

**15** ທີ່ພະເຈົ້າສ້າງມະນຸດໃນ ປະຖົມມະການ 2:7 ພະອົງເອົາຫຍັງມາປັ້ນເຮັດຮູບມະນຸດ? ____

**16** ກ. ແມ່ນໃຜສ້າງມະນຸດມາປະກອບດ້ວຍ 3 ສ່ວນນັ້ນ? ____________________

ຂ. ຄືສາມສ່ວນໃດ? ____________ ____________ ____________

**17** ໃນປະຖົມມະການ 1:27 ພະອົງສ້າງມະນຸດໃຫ້ຕ່າງກັນກັບສັດອື່ນໆ ຢ່າງໃດ? ________

**18** ໃນ ມັດທາຍ ເຫຼັ້ມທີ 4 ບົດທີ 7 ເຮົາຮຽນມາແລ້ວວ່າ ພະເຈົ້າສ້າງມະນຸດທີ່ມີຮູບຮ່າງຄ້າຍຄືກັນກັບພະເຈົ້າ. ມີລັກສະ ນະບາງປະການທີ່ມະນຸດຄ້າຍຄືກັນກັບພະເຈົ້າດັ່ງຕໍ່ໄປນີ້ຄື: (ໃຫ້ຈັດເປັນຄູ່ກັນ)

ກ. ມີຄວາມຮັກ ______ ຄວາມຄິດ

ຂ. ນຶກຄິດໄດ້ ______ ກໍາລັງ

ຄ. ແຕ່ງສິ່ງສວຍງາມ ______ ຈິດໃຈ

**19** ເມື່ອພະເຈົ້າສ້າງມະນຸດໃຫ້ບໍລິບູນໃນ 3 ດ້ານໃດ?

________________ ________________ ________________

**20** ກ່ອນທີ່ອາດາມບໍ່ໄດ້ຕົກໃນບາບເທື່ອ ທັງສາມສ່ວນນັ້ນສົມດຸນກັນ ແຕ່ເມື່ອມີບາບມາແລ້ວກໍບໍ່ສົມດຸນກັນ. ໃນປະຈຸບັນ ນີ້ ມະນຸດເຮົາອາດສາມາດປົກຄອງສ່ວນໃດສ່ວນໜຶ່ງແຕ່ສ່ວນທີ່ເຫຼືອນັ້ນບັງຄັບບໍ່ໄດ້. ຍົກຕົວຢ່າງ: (ຕື່ມຄວາມຂາດ)

ກ. ຜູ້ບ່າວຄຣິດສະຕຽນທີ່ຕິດຮັກກັບຜູ້ສາວບໍ່ໄດ້ເປັນຄຣິດສະຕຽນແລ້ວກໍເອົາເປັນເມຍ. ຜູ້ນັ້ນຮູ້ຢູ່ແລ້ວວ່າພະຄໍາພີ ຫ້າມເພິ່ນໃຫ້ ____________________ ມາບັງຄັບຄວາມຄິດ.

ຂ. ຜູ້ທີ່ຮູ້ພະຄຳພີດີ ແລ້ວປະຕິບັດຕາມຂໍ້ຄວາມທຸກປະການແຕ່ຂາດບໍ່ມີຄວາມຮັກຕໍ່ຜູ້ອື່ນຄົນນັ້ນໃຫ້ ຄວາມ ________________________________________ ມາມອດຈິດໃຈ.

**21** ເມື່ອມະນຸດຕົກໃນບາບລັກສະນະຂອງມະນຸດນັ້ນເລີຍຄິດໂກງຕໍ່ໄປຈຶ່ງບໍ່ປົກກະຕິ. ໃນໂລມ 7:18 ໂປໂລຂຽນໄວ້ວ່າ "ເພາະວ່າເຈຕະນາດີນັ້ນເຮົາກໍມີຢູ່ ແຕ່ທີ່ຈະເຮັດການດີນັ້ນເຮົາບໍ່ໄດ້ເຮັດ" ສ່ວນອາຈານໂປໂລ ກ່າວວ່າກຳລັງມີ ແຮງເໜືອກວ່າຄວາມຄິດຫຼືຄວາມຄິດມີແຮງຫຼາຍກວ່າ? ____________________________________________________________

**22** ໃຫ້ຍົກຕົວຢ່າງຜູ້ທີ່ມີລັກສະນະຢ່າງຄິດໂກງ

ກ. ຜູ້ທີ່ມີຄວາມສຸກຫຼາຍເກີນໄປມື້ນີ້ ແລ້ວມື້ອື່ນເສົ້າໃຈໜັກ ຈິດໃຈຂອງຄົນນັ້ນຄິດ ________________________________________________(ຕື່ມ ຄວາມທີ່ຂາດ)

ຂ. ຜູ້ທີ່ສຶກສາພະຄຳພີຫຼາຍປານໃດກໍຕາມ ແຕ່ຍັງບໍ່ເຂົ້າໃຈດີຄົນນັ້ນມີຄວາມຄິດຢ່າງໃດ?

________________________________________________________________

ຄ. ຄົນທີ່ຮູ້ເຮັດດີແລະຢາກເຮັດດີດ້ວຍ ແຕ່ບໍ່ສາມາດບັງຄັບຕົວໄດ້ ກຳລັງຂອງຄົນຢ່າງນັ້ນເປັນຢ່າງໃດ? ________________________________________________________

**23** ກ. ກ່ອນທີ່ມະນຸດບໍ່ໄດ້ຕົກໃນຄວາມບາບເທື່ອ ສາມສ່ວນໃນລັກສະນະຂອງມະນຸດນັ້ນເປັນຢ່າງໃດ? ________________________________________________________

ຂ. ແຕ່ຫຼັງຈາກຕົກໃນບາບແລ້ວ ເປັນຢ່າງໃດ? ______________________________

**24** ໃນຢາໂກໂບ 5:20 ຜູ້ໃດທີ່ຕ່າວຄືນຈາກທາງຜິດບາບໃຫ້ພົ້ນຈາກຄວາມຕາຍ? ຈຸດປະສົງຂອງພະເຢຊູທີ່ຈະໃຫ້ ພົ້ນຢ່າງບໍລິບູນຈະໃຫ້ພົ້ນໃນ 3 ສ່ວນໃດ?

_________________ ____________________ ແລະ ___________________

**25** ໃນມາລະໂກ 12:30 ເຮົາຈົ່ງຮັກພະເຈົ້າດ້ວຍສຸດໃຈ,ດ້ວຍສຸດຈິດ,ດ້ວຍສຸດຄວາມຄິດແລະສຸດກຳລັງຂອງເຈົ້າ. ຄື ຈົ່ງຮັກພະອົງຢ່າງບໍລິບູນ ຈົ່ງຮັກພະອົງດ້ວຍຈັກສ່ວນ? ____________

**26** ລັກສະນະມະນຸດເຮົາ ອາດຈະປຽບກັບຕັ່ງສາມຂານີ້ກໍໄດ້: ຕັ່ງໜ່ວຍໃດປຽບທຽບຄົນທີ່ບໍລິບູນໃນຄວາມຮັກຕໍ່ພະເຈົ້າ? ____________________________________________

ກ



ຂ



ຄ



**27** ກ. ຖ້າວ່າເຮົາຈະເປັນຄົນຢ່າງສົມບູນເຮົາຄວນມີທ່າທີຕໍ່ພະເຈົ້າຢ່າງໃດ? (ເລືອກ)

ກ. _____ ຢ່າງເສີຍເມີຍ ຂ. _____ ອິດທົນ ຄ. _____ ຮັກ

ຂ. ແລ້ວຈົ່ງຮັກພະເຈົ້າດ້ວຍ ______ ຈິດໃຈ ______ ຄວາມຄິດແລະ _____ ກຳລັງ. (ຕື່ມ)

**28** ຜູ້ທີ່ຈະເປັນຄົນສົມບູນດ້ານວິນຍານຈົ່ງຮັກໃຜຢ່າງຄົບຖ້ວນ? ____________________

**29** ໃນມາລະໂກ 12:30 ພະເຍຊູບັນລະຍາຍຄົນທີ່ມີຄວາມຮັກຕໍ່ພະເຈົ້າຢ່າງຄົບຖ້ວນດັ່ງຕໍ່ໄປນີ້:

ກ. ຈົ່ງຮັກດ້ວຍສຸດ ______ ສຸດ ______

ຂ. ດ້ວຍສຸດ __________________

ຄ. ແລະດ້ວຍສຸດ _______________




**30** ກ. ແມ່ນໃຜສ້າງມະນຸດ? ____________________________________________

ຂ. ສ້າງໃຫ້ເປັນຢ່າງໃດ? ____________________________________________

ຄ. ຫຼັງຈາກຕົກໃນບາບເລີຍບໍ່ ____________ ແລະຄິດ _________ . (ຕື່ມຄວາມຂາດ)

**31** ຄົນທີ່ມອບຕົວໄວ້ໃຫ້ພະເຈົ້າຈະຮັກພະເຈົ້າດ້ວຍສຸດ ___________ ສຸດ ___________ ດ້ວຍສຸດ __________________ ແລະດ້ວຍສຸດ ____________________ ຂອງເຈົ້າ.

**32** ໃນອາທິດສຸດທ້າຍນີ້ ທີ່ເຫັນພະເຍຊູມອບຕົວໄວ້ໃຫ້ຮັກພະບິດາຢ່າງຄົບຖ້ວນສົມບູນ. (ຕື່ມຄວາມທີ່ຂາດ)

ກ. ໃນວັນອັງຄານ ພະອົງໂຕ້ຖຽງກັບຜູ້ນຳດ້ານສາດສະໜາຢິວໃນພະວິຫານພະອົງມອບຄວາມ ____________________________________________ ໄວ້ໃຫ້ພະບິດາ.

ຂ. ໃນວັນອັງຄານວັນດຽວກັນນັ້ນ ພະອົງຊົງເສຍພະໄທຍ້ອນກຸງເຢລູຊາເລັມດ້ວຍສຸດ ____________________ ສຸດ ____________________ (ມທ 23:37)

ຄ. ຄ່ຳວັນພະຫັດໃນສວນເຄັດເຊມາເນ ພະອົງມອບຕົວທັງກຳລັງໄວ້ໃຫ້ ____ . (ມທ 26:42)

**33** ຊີວິດຂອງພະເຍຊູສະແດງຄວາມຮັກຢ່າງຄົບຖ້ວນຕໍ່ພະບິດາ.

ກ. ພະອົງມອບຄວາມຄິດໄວ້ໃຫ້ພະບິດາໃນການໂຕ້ຖຽງກັບໃຜ? ________________

ຂ. ສະແດງການມອບຈິດໃຈໄວ້ໃຫ້ພະບິດາໃນການຮ້ອງໄຫ້ຍ້ອນກຸງໃດ? ____________

ຄ. ມອບກຳລັງກາຍໃຫ້ພະບິດາໃນສວນໃດ? ________________________________

| |
|---|
| ໃຫ້ທ່ານກັບໄປເບິ່ງຮູບໜ້າປົກບົດນີ້ອີກ. ມີຮູບ 3 ໃບສະແດງເຖິງຊີວິດຄົນທີ່ຮັກພະເຈົ້າຢ່າງຄົບຖ້ວນ. ໃຫ້ຂຽນຄວາມທີ່ຂາດຂ້າງລຸ່ມຮູບເຫຼົ່ານັ້ນໃຫ້ຖືກ. |

**34** ນັກທຳຖາມ ພະບັນຍັດຂໍ້ໃຫຍ່ຈາກພະເຍຊູ ແຕ່ພະເຍຊູສະເໜີພະບັນຍັດສອງປະການມາ.

ກ. ພະບັນຍັດທຳອິດທີ່ພະອົງຍົກມາຈາກພະຄຳພີເດີມຄື ພະບັນຍັດສອງ 6:5 ພະບັນຍັດນັ້ນວ່າຢ່າງໃດ? ____________________________________________

ຂ. ຂໍ້ທີສອງທີ່ພະອົງຍົກມາຄືຫຍັງ? ____________________________________

## ພະບັນຍັດທີສອງ

**35** ກ. ພະບັນຍັດຂໍ້ທຳອິດວ່າຈົ່ງຮັກພະເຈົ້າ ແຕ່ຂໍ້ທີສອງບອກວ່າ ຈົ່ງຮັກໃຜ? ____________

ຂ. ຮັກເຖິງຂະໜາດໃດ? ____________________________________________

*ຂໍ້ທີສອງນັ້ນມີຄວາມໝາຍຢ່າງກວ້າງຂວາງແຕ່ເຮົາຈະພາກັນຮຽນເລື່ອງລັກສະນະຄົນທີ່ຮັກເພື່ອນບ້ານປານນັ້ນ.*

**36** ມະນຸດເຮົາທີ່ຕົກໃນຄວາມບາບ ກໍມີສ່ວນເສຍຫາຍໃນທຸກດ້ານ. ຖ້າເຮົາຮັກພະເຈົ້າດ້ວຍສຸດຈິດໃຈ ສຸດຄວາມຄິດແລະ ສຸດກໍາລັງ ພະເຈົ້າຈະຊ່ວຍໃຫ້ເຮົາສົມບູນດີຂຶ້ນມາ ແລ້ວເຮົາກໍຈະມີຄວາມຮັກຕໍ່ເພື່ອນບ້ານອີກດ້ວຍ. ເຮົາຢາກຈະໃຫ້ເຂົາຮັກພະເຈົ້າຢ່າງສົມບູນຄືກັນ ຄືຮັກດ້ວຍສຸດ ________ ສຸດ ________ ດ້ວຍສຸດ __________ ແລະສຸດ ___________ . (ຕື່ມ)

**37** ຖ້າເຮົາຈະນໍາໃຫ້ເພື່ອນບ້ານມາໄວ້ວາງໃຈໃນພະເຍຊູເຮົາຄວນຈະປ່າວປະກາດໃຫ້ຖືກກັບເຂົາໃນທຸກສ່ວນ. ດັ່ງນັ້ນເຮົາ ຄວນປະກາດໄປຢ່າງໃດ? (ເລືອກ)

ກ. ຊັກຊວນໃຫ້ເຂົາມາເຊື່ອໃນພະເຍຊູດ້ວຍ ກ່າວເລື່ອງທີ່ຕື່ນເຕັ້ນແທນທີ່ຈະກ່າວເລື່ອງຈາກພະຄໍາພີ.

ຂ. ສອນແຕ່ຫຼັກໂອວາດຈາກພະຄໍາພີຢ່າງໃຈເຢັນໆ ດ້ວຍບໍ່ໃຫ້ເວົ້າຄວາມທີ່ຈະໃຫ້ໃຈເຂົາຕື່ນເຕັ້ນ.

ຄ. ຍົກສະເໜີຄວາມຈິງຈາກພະຄໍາພີ ແລ້ວຊັກຈູງໃຫ້ເຂົາມອບຕົວໄວ້ກັບພະເຍຊູຈິ່ງຈະໄດ້ລອດ.

**38** ການປ່າວປະກາດຂ່າວປະເສີດທີ່ເໝາະສົມຄວນປະກອບດ້ວຍ:

1. ອະທິບາຍເລື່ອງຂອງພະເຍຊູໃຫ້ເຂົາເຂົ້າໃຈດີ ໃຫ້ເຂົາສຶກສາຮູ້ເລື່ອງຄວາມຈິງໃນພະຄໍາຂອງພະເຈົ້າ.
2. ໃຫ້ເຂົາສໍານຶກຄວາມຮັກຂອງພະເຍຊູ ເພື່ອຜູ້ຟັງຢ່າງທີ່ຈະຖືກໃຈເຂົາ.
3. ນໍາໃຫ້ເຂົາມີກໍາລັງໃຈຕັດສິນວ່າຈະຕິດຕາມພະເຍຊູຕໍ່ໄປ.

ກ. ໃນ 3 ປະໂຫຍກນັ້ນ ແມ່ນປະໂຫຍກໃດທີ່ມີຈຸດອ້າງເຖິງຈິດໃຈ? ______________

ຂ. ປະໂຫຍກໃດຖືກກັບຄວາມຄິດ? ______________________________________

ຄ. ປະໂຫຍກໃດຖືກກັບກໍາລັງ? _________________________________________

**39** ຄົນໃດທີ່ບໍ່ຍອມມອບຕົວໄວ້ກັບພະອົງຢ່າງຄົບຖ້ວນເປັນຢ່າງໃດ? (ເລືອກ)

ກ. ບໍ່ສົມບູນ ຂ. ພໍໃຊ້ໄດ້ ຄ. ບໍລິບູນ

**40** ຖ້າເຮົາຈະປ່າວປະກາດໃຫ້ເພື່ອນບ້ານຟັງ ເຮົາຢາກໃຫ້ເຂົາຕັດສິນໃຈຢ່າງໃດ? ________

_________________________________________________________________

**41** ເປົ້າໝາຍສຸດທ້າຍໃນການປ່າວປະກາດຄື ໃຫ້ເຂົາໄວ້ວາງໃຈມອບຕົວໃຫ້ພະເຈົ້າຢ່າງຄົບຖ້ວນ. ຖ້າຈະມາເພິ່ງພະອົງ ຕ້ອງລວມທັງຈິດໃຈຄວາມຄິດແລະກຳລັງ. ໃນບ່ອນຫວ່າງຕໍ່ໄປນີ້ ໃຫ້ຂຽນຄຳທີ່ທ່ານອາດຈະເວົ້າ ໃນການປ່າວປະກາດໃຫ້ຖືກກັບແຕ່ລະສ່ວນ:

ເພື່ອຖືກກັບຄວາມຄິດ: ____________________________________________

____________________________________________________________

____________________________________________________________

____________________________________________________________

ເພື່ອໃຫ້ຖືກກັບຈິດໃຈ: ____________________________________________

____________________________________________________________

____________________________________________________________

____________________________________________________________

ເພື່ອໃຫ້ຖືກກັບກຳລັງ: ____________________________________________

____________________________________________________________

____________________________________________________________

____________________________________________________________

**42** ພະເຍຊູບັນລະຍາຍຄົນທີ່ມອບຕົວໃຫ້ພະເຈົ້າຢ່າງຄົບຖ້ວນ ເປັນຄົນທີ່ມີຄວາມຮັກຢ່າງໃດ?

____________________________________________________________

____________________________________________________________

____________________________________________________________

*ຢ່າປະບົດເສັງທີ 6!*

**ຄຳຕອບ:**

**1** *ກ. ວັນອັງຄານ ຂ. ພະວິຫານ ຄ. ທຳບັນດິດ (ທະນາຍຄວາມ) ງ. ຟາລີຊາຍ*
*ຈ. "ໃນພະບັນຍັດ ຂໍ້ໃດເປັນຂໍ້ໃຫຍ່?" ສ. ສອງປະການ*

**2** *ກ. ນັກທຳ ຂ. ຟາລີຊາຍ ຄ. ເຫັນພ້ອມ*
*ງ. "ທ່ານບໍ່ໄກຈາກແຜ່ນດິນຂອງພະເຈົາ"*

**3** *ກ. "ຈົ່ງຮັກອົງພະຜູ້ເປັນເຈົາຂອງເຈົາດ້ວຍຈຸດໃຈ,ດ້ວຍສຸດຈິດແລະດ້ວຍສຸດຄວາມຄິດຂອງເຈົາ" ຂ. ພບຍ 6:5 ຄ. "ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ"*
*ງ. ເລວີ 19:18*

**4** *ຄວາມຮັກ*

**5** *ກ. ຂໍ້ໃຫຍ່ ຂ. ທີສອງ*

**ຄຳຕອບ (ຕໍ່):**

**6** *ຮັກພະເຈົ້າ*

**7** *ກ. ອົງພະຜູ້ເປັນເຈົ້າ ຂ. ໃຈ... ຈິດ... ຄວາມຄິດ... ກຳລັງ.*

**8** *ງ ຖືກ*

**9** *ສຸດໃຈ ສຸດຄວາມຄິດ ສຸດຈິດ ສຸດກຳລັງ*

**10** *ຈິດໃຈ ຄ. ຄວາມຄິດ ກ. ກຳລັງ ຂ.*

**11** *ກ. ກຳລັງ ຂ. ຈິດໃຈ ຄ. ຄວາມຄິດ*

**12** *ມາລະໂກ 12:30*

**13** *ກ. ຈິດໃຈ ຂ. ຄວາມຄິດ ຄ. ກຳລັງ*

**14** *3 ສ່ວນ*

**15** *ດິນ*

**16** *ກ. ພະເຈົ້າ ຂ. ຈິດໃຈ ຄວາມຄິດ ກຳລັງ*

**17** *ຄ້າຍຄືກັນກັບພະເຈົ້າ.*

**18** *ກ. ຂຶ້ນກັບຈິດໃຈ ຂ. ຂຶ້ນກັບຄວາມຄິດ ຄ. ຂຶ້ນກັບກຳລັງ*

**19** *ຈິດໃຈ ຄວາມຄິດ ກຳລັງ*

**20** *ກ. ຈິດໃຈ ຂ. ຄວາມຄິດ*

**21** *ກຳລັງ*

**22** *ກ. ຄົດໂກງ ຂ. ຄົດໂກງ ຄ. ຄົດໂກງ*

**23** *ກ. ສົມດຸນກັນ ຂ. ບໍ່ສົມດຸນກັນ*

**24** *ຈິດໃຈ, ຄວາມຄິດ ແລະ ກຳລັງ*

**25** *ທັງໝົດ 3 ສ່ວນ*

**26** *ຄ ຖືກ*

**27** *ກ. ຄ ຖືກ ຂ. ສຸດ... ສຸດ... ສຸດ*

**28** *ຮັກພະເຈົ້າ*

**29** *ກ. ຈິດ... ໃຈ ຂ. ສົມບູນ (ບໍລິບູນ) ຄ. ສົມດຸນ... ຄົດໂກງ*

**30** *ກ. ພະເຈົ້າ ຂ. ຄວາມຄິດ ຄ. ກຳລັງ*

**31** *ຈິດ... ໃຈ... ຄວາມຄິດ... ກຳລັງ*

**32** *ກ. ຄິດ ຂ. ຈິດ... ໃຈ ຄ. ພະເຈົ້າ*

**33** *ກ. ຜູ້ນຳສາດສະໜາຢິວ (ຟາລິຊາຍ ແລະ ນັກທຳ) ຂ. ກຸງເຢລູຊາເລັມ*
*ຄ. ເຄັດເຊມາເນ*

**34** *ກ. ຈົ່ງຮັກພະເຈົ້າດ້ວຍສຸດຈິດສຸດໃຈສຸດຄວາມຄິດແລະສຸດກຳລັງ (ຄຳຄ້າຍຄືກັນກໍໄດ້)*
*ຂ. ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ*

**35** *ກ. ຮັກເພື່ອນບ້ານ ຂ. ເໝືອນຮັກຕົນເອງ.*

**ຄຳຕອບ (ຕໍ່):**

**36** *ຈິດ... ໃຈ, ຄວາມຄິດ ກຳລັງ*

**37** *ຄ ຖືກ*

**38** *ກ. ຖືກກັບ 2 ຂ. ຖືກກັບ 1 ຄ. ຖືກກັບ 3*

**39** *ກ ຖືກ*

**40** *ຮັກພະເຈົ້າຢ່າງຄົບຖ້ວນ. (ຄຳຄ້າຍຄືກັນກໍໄດ້)*

**41** *(ບໍ່ມີຄຳຕອບຕາຍຕົວ ໃຫ້ແລກປ່ຽນຄວາມຄິດເຫັນກັນໃນປະຊຸມ)*

**42** *ຄືນທີ່ຮັກພະເຈົ້າດ້ວຍສຸດຈິດສຸດໃຈ ສຸດຄວາມຄິດ ແລະສຸດກຳລັງ ແລ້ວຮັກເພື່ອນບ້ານເໝືອນຮັກຕົນເອງ.*